ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ
(ທົບທວນຄືນ)

ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2023

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນການປີ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງບໍລິສັດ ມະຫະທຶນເຊົ່າສິນເຊື່ອ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນທາງການເງິນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມີຖຸນາ 2023, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະຫົກເດືອນສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນການປີໂດຍຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການກະກຽມ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນການປີ. ຄວາມຮັບຜິດຊອບ ຂອງພວກຂ້າພະເຈົ້າຄືການອອກບົດສະຫຼຸບຕໍ່ເອກະສານລາຍງານການເງິນດັ່ງກ່າວບົນພື້ນຖານການທົບທວນຄືນ ຂອງພວກຂ້າພະເຈົ້າ.

ຂອບເຂດ ການທົບທວນຄືນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານ ການທົບທວນຄືນແບບສາກົນ 2410 "ການທົບທວນຄືນເອກະສານລາຍງານການເງິນການປີ ໂດຍຜູ້ກວດສອບອິດສະຫຼະ". ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິໄຈຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນນີ້ມີຂອບເຂດຈຳກັດກວ່າການກວດສອບຕາມມາດຕະຖານການກວດສອບສາກົນ. ສະນັ້ນ, ການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກຂ້າພະເຈົ້າໄດ້. ດັ່ງນັ້ນ, ພວກຂ້າພະເຈົ້າຈະບໍ່ສະແດງຄວາມເຫັນຕໍ່ເອກະສານລາຍງານການປີ.

ສະຫຼຸບ

ບົນພື້ນຖານ ການທົບທວນຄືນຂອງພວກຂ້າພະເຈົ້າ, ບໍ່ມີສິ່ງໃດທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນການປີ ດັ່ງກ່າວ ບໍ່ໄດ້ກະກຽມຂໍ້ມູນທີ່ຖືກຕ້ອງ ໃນລັກສະນະທີ່ຖືໄດ້ວ່າມີຄວາມສຳຄັນຫຼາຍ ຕາມນະໂຍບາຍການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ທ່ານ ອະພິສິດ ທ່ຽງຕິງພິນໂຍ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 8 ສິງຫາ 2023

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2023

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	318.661.337	6.679.159.473
ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ			
ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ - ສັດສ່ວນໝຸນວຽນ	5	59.939.861.712	56.170.138.344
ຊັບສິນຖືໄວ້ເພື່ອຂາຍ, ສຸດທິ	6	388.476.831	261.652.873
ຊັບສິນໝຸນວຽນອື່ນໆ	7	935.211.723	676.742.783
ລວມຊັບສິນໝຸນວຽນ		**61.582.211.603**	**63.787.693.473**
ຊັບສິນບໍ່ໝຸນວຽນ			
ເງິນຝາກຄ້ຳປະກັນເງິນກູ້	8	2.000.000.000	2.000.000.000
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ		2.000.002.700	2.000.002.700
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ			
ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	5	31.158.869.782	40.436.766.879
ຊັບສິນຄົງທີ່ມີຕົວຕົນ, ສຸດທິ	9	680.190.206	649.599.179
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ	10	91.371.485	129.298.349
ຊັບສິນບໍ່ໝຸນວຽນ ອື່ນໆ		25.101.278	57.683.513
ລວມຊັບສິນບໍ່ໝຸນວຽນ		**35.955.535.451**	**45.273.350.620**
ລວມຊັບສິນ		**97.537.747.054**	**109.061.044.093**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2023

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2023

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2023

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	11	5.576.534.614	3.586.598.484
ໜີ້ຕ້ອງສົ່ງອາກອນລາຍໄດ້		-	2.541.872.732
ເງິນກູ້ຢືມໄລຍະຍາວ - ສັດສ່ວນໝຸນວຽນ	12	6.285.345.633	22.429.331.514
ໜີ້ສິນໝຸນວຽນອື່ນໆ		47.697.091	46.335.134
ລວມໜີ້ສິນໝຸນວຽນ		**11.909.577.338**	**28.604.137.864**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	12	9.192.007.009	9.330.019.783
ໜີ້ສິນບໍ່ໝຸນວຽນອື່ນໆ		217.825.000	207.575.000
ລວມໜີ້ສິນບໍ່ໝຸນວຽນ		**9.409.832.009**	**9.537.594.783**
ລວມໜີ້ສິນ		**21.319.409.347**	**38.141.732.647**
ທຶນເຈົ້າຂອງ			
ທຶນຈົດທະບຽນ		40.000.000.000	40.000.000.000
ສ່ວນເພີ່ມມູນຄ່າຮຸ້ນ		12.832.667.550	12.832.667.550
ກຳໄລສະສົມ			
ຄັງສະສົມຕາມລະບຽບການ		4.890.597.270	4.890.597.270
ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ		18.495.072.887	13.196.046.626
ທຶນເຈົ້າຂອງ		**76.218.337.707**	**70.919.311.446**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**97.537.747.054**	**109.061.044.093**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2023

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2023

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 15 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານຜົນໄດ້ຮັບ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2023

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2023 ກີບ	ທົບທວນຄືນ 30 ມິຖຸນາ 2022 ກີບ
ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ ສິນເຊື່ອຜ່ອນຊຳລະ		18.227.984.725	15.354.064.381
ລວມລາຍຮັບ		**18.227.984.725**	**15.354.064.381**
ລາຍຮັບອື່ນໆ		771.044.699	684.777.834
ລາຍຈ່າຍໃນການບໍລິຫານ	13	(9.462.432.229)	(7.221.016.465)
ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ		(1.001.365.761)	(798.240.462)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(1.545.548.312)	(5.864.877.378)
ກຳໄລຈາກການດຳເນີນງານ		**6.989.683.122**	**2.154.707.910**
ລາຍຈ່າຍການເງິນ		(1.690.656.861)	(1.577.652.163)
ກຳໄລສຸດທິກ່ອນອາກອນ		**5.299.026.261**	**577.055.747**
ລາຍຈ່າຍອາກອນ	15	-	(1.299.642.996)
ກຳໄລ/(ຂາດທຶນ) ສຸດທິ		**5.299.026.261**	**(722.587.249)**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	16	13,25	(1,81)

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2023

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2023

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 15 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2023

	ບິດ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ກຳໄລສະສົມ ຖັງສະສົມຕາມລະບຽບການ ກີບ	ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ	ລວມ ກີບ
ໃນວັນທີ 1 ມັງກອນ 2022		40.000.000.000	12.832.667.550	4.785.832.107	14.533.160.157	72.151.659.814
ຂາດທຶນ		-	-	-	(722.587.249)	(722.587.249)
ຈ່າຍເງິນປັນຜົນ	14	-	-	-	(2.280.000.000)	(2.280.000.000)
ໃນວັນທີ 30 ມິຖຸນາ 2022		**40.000.000.000**	**12.832.667.550**	**4.785.832.107**	**11.530.572.908**	**69.149.072.565**
ໃນວັນທີ 1 ມັງກອນ 2023		40.000.000.000	12.832.667.550	4.890.597.270	13.196.046.626	70.919.311.446
ກຳໄລ		-	-	-	5.299.026.261	5.299.026.261
ຈ່າຍເງິນປັນຜົນ	14	-	-	-	-	-
ໃນວັນທີ 30 ມິຖຸນາ 2023		**40.000.0000.000**	**12.832.667.550**	**4.890.597.270**	**18.495.072.887**	**76.218.337.707**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2023

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2023

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 15 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2023

	ບົດອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ທີ່ບທວນຄືນ 30 ມິຖຸນາ 2022 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ກຳໄລກ່ອນອາກອນ		5.299.026.261	577.055.747
ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ			
ໜີ້ສູນ		162.834.005	(3.128.000)
ສຳຮອງໜີ້ສົງໄສຈະເສຍ		838.531.756	801.368.462
ຄ່ານາຍໜ້າລໍຖ້າຕັດບັນຊີ		1.376.394.852	2.010.766.108
ການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ		7.500.000	(5.000.000)
ຄ່າຫຼຸ້ຍຫ້ຽນ	9, 10	198.095.527	273.803.802
ລາຍຈ່າຍການເງິນ		1.690.656.861	1.577.652.163
ຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		825.502.365	5.909.053.707
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**10.398.541.627**	**11.141.571.989**
ການປ່ຽນແປງທຶນໝຸນວຽນ:			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ		3.645.969.748	(6.622.618.781)
ຊັບສິນຖືໄວ້ເພື່ອຂາຍ		(134.323.958)	47.775.281
ຊັບສິນບໍ່ໝຸນວຽນອື່ນໆ		(225.886.705)	(81.363.428)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		585.441.284	(2.434.413.519)
ໜີ້ສິນໝຸນວຽນອື່ນໆ		1.045.824	(35.883.668)
ໜີ້ສິນບໍ່ໝຸນວຽນອື່ນໆ		10.250.000	8.450.000
ເງິນສົດຈາກກິດຈະກຳດຳເນີນງານ		**14.281.037.820**	**2.023.517.874**
ລາຍຈ່າຍຄ່ານາຍໜ້າ		(464.500.000)	(2.012.050.000)
ລາຍຈ່າຍດອກເບ້ຍ		(286.162.015)	(1.541.977.194)
ລາຍຈ່າຍອາກອນ		(2.541.872.732)	(1.166.585.046)
ເງິນສົດສຸດທິຈາກ/(ໃຊ້ໄປໃນ)ກິດຈະກຳດຳເນີນງານ		**10.988.503.073**	**(2.697.094.366)**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2023

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2023

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 15 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2023

	ບົດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ທີ່ບທວນຄືນ 30 ມິຖຸນາ 2022 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ເງິນສົດຈ່າຍຊື້ຊັບສິນບັດຖຶງທີ່ມີຕົວຕົນ	9	(190.759.690)	(57.407.327)
ເງິນຝາກຄ້ຳປະກັນເງິນກູ້	8	-	(2.000.000.000)
ເງິນສົດສຸດທິໃຊ້ໄປໃນກິດຈະກຳການລົງທຶນ		**(190.759.690)**	**(2.057.407.327)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດໄດ້ຮັບຈາກເງິນກູ້ຢືມ	12	5.628.240.000	5.000.000.000
ຈ່າຍຄືນເງິນກູ້ຢືມ	12	(22.819.118.655)	(243.337.442)
ຈ່າຍເງິນປັນຜົນ	14	-	(2.280.000.000)
ເງິນສົດສຸດທິຈາກ(ໃຊ້ໄປໃນ)ກິດຈະກຳການເງິນ		**(17.190.878.655)**	**2.476.662.558**
ໜຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**(6.393.135.272)**	**(2.277.839.135)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນງວດ		6.679.159.473	13.057.187.126
ກຳໄລຈາກອັດຕາແລກປ່ຽນ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		32.637.136	146.050.157
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ	4	**318.661.337**	**10.925.398.148**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2023

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2023

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 15 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

1 ຂໍ້ມູນທົ່ວໄປ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ຈົດທະບຽນສ້າງຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດ ໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ກິໂລແມັດ 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ ລົດຈັກ, ລົດໄຖ ແລະ ຄຳ.

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກບົດລາຍງານ ໂດຍຄະນະບໍລິຫານໃນວັນທີ 8 ສິງຫາ 2023.

2 ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນກາງປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2022. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2022.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານໃຊ້ດຸນພິນິດ, ການຄາດຄະເນ ແລະ ການສົມມຸດຕິຖານທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກ ຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານສະບັບນີ້, ຜູ້ບໍລິຫານໄດ້ໃຊ້ດຸນພິນິດທີ່ເປັນສາລະສຳຄັນໂດຍປະອີງຕາມນະໂຍບາຍການບັນຊີ ຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນຂອງຄວາມບໍ່ແນ່ນອນຂອງການປະມານການເຊັ່ນດຽວກັບທີ່ໃຊ້ກັບເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2022.

4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ເງິນສົດໃນມື	22.751.756	25.884.159
ເງິນຝາກໃນທະນາຄານ	295.909.581	6.653.275.314
ລວມ	**318.661.337**	**6.679.159.473**

5 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໝຸນວຽນ		
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	1.306.657.910	1.304.674.924
ສັດສ່ວນໝຸນວຽນຂອງລູກໜີ້ສິນເຊື່ອຜ່ອນຊຳລະ	64.244.057.022	59.089.032.739
	65.550.714.932	**60.393.707.663**
ເພີ່ມ ຕົ້ນທຶນທາງກົງ	849.890.532	1.260.729.026
ຫັກ ສຳຮອງໜີ້ສົງໄສຈະເສຍ	(6.460.743.752)	(5.484.298.345)
	59.939.861.712	**56.170.138.344**
ບໍ່ໝຸນວຽນ		
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	347.825.268	480.170.540
ລູກໜີ້ສິນເຊື່ອຜ່ອນຊຳລະ	30.628.959.070	39.411.368.189
	30.976.784.338	**39.891.538.729**
ເພີ່ມ ຕົ້ນທຶນທາງກົງ	692.061.278	1.193.117.636
ຫັກ ສຳຮອງໜີ້ສົງໄສຈະເສຍ	(509.975.834)	(647.889.486)
	31.158.869.782	**40.436.766.879**
ລວມ	**91.098.731.494**	**96.606.905.223**

5 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ (ຕໍ່)

ໃນວັນທີ 30 ມິຖຸນາ 2023, ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊຳລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ບໍ່ຄົບກຳນົດ	77.101.912.280	82.651.207.657
1 – 3 ເດືອນ	11.722.747.697	10.670.660.205
4 – 6 ເດືອນ	1.177.474.132	840.975.684
7 – 12 ເດືອນ	993.567.431	1.726.930.204
ເກີນ 12 ເດືອນ	5.531.797.730	4.395.472.642
	96.527.499.270	**100.285.246.392**
ເພີ່ມ ຕົ້ນທຶນທາງກົງ	1.541.951.810	2.453.846.662
ຫັກ ສຳຮອງໜີ້ສົງໄສຈະເສຍ	(6.970.719.586)	(6.132.187.831)
ລວມ	**91.098.731.494**	**96.606.905.223**

6 ຊັບສິນຖືໄວ້ເພື່ອຂາຍ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ລົດຈັກ	415.976.831	281.652.873
ຫັກ ເງິນແຮການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ	(27.500.000)	(20.000.000)
ລວມ	**388.476.831**	**261.652.873**

7 ຊັບສິນໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ລາຍຈ່າຍລ່ວງໜ້າ - ສັດສ່ວນໝຸນວຽນ	696.502.894	535.837.453
ຊຳລະເງິນລ່ວງໜ້າ	39.600.523	25.873.630
ຈ່າຍລ່ວງໜ້າ – ຄ່ານາຍໜ້າ	113.469.200	111.096.700
ອື່ນໆ	85.639.106	3.935.000
ລວມ	**935.211.723**	**676.742.783**

8 ເງິນຝາກຄ້ຳປະກັນເງິນກູ້

ແມ່ນເງິນທີ່ບໍ່ສາມາດນຳໃຊ້ໄດ້ ເຊິ່ງລວມມີບັນຊີເງິນຝາກມີກຳນົດ 1.500 ລ້ານກີບ ແລະ ບັນຊີກະແສລາຍວັນທີ່ຕ້ອງມີເງິນຂັ້ນຕ່ຳ 500 ລ້ານກີບ ທີ່ໃຊ້ເປັນເງິນຄ້ຳປະກັນສຳລັບການກູ້ຢືມນຳທະນາຄານທຸລະກິດພາຍໃນປະເທດຕະຫຼອດໄລຍະສັນຍາກູ້ຢືມ (ບົດອະທິບາຍ 12).

9 ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2023 – ກວດສອບ	649.599.179
ເພີ່ມຂຶ້ນ	190.759.690
ຫັກ: ຄ່າຫຼ້ຽຫ້ຽນ	(160.163.663)
ມູນຄ່າສຸດທິຕາມບັນຊີ ໃນວັນທີ 30 ມິຖຸນາ 2023 – ທີ່ບທອນຄືນ	**680.190.206**

ຊັບສິນຄົງທີ່ມີຕົວຕົນເພີ້ມຂຶ້ນໃນໄລຍະ 6 ເດືອນ ຕົ້ນຕໍແມ່ນການຕົບແຕ່ງຫ້ອງການ 45,5 ລ້ານກີບ, ເຄື່ອງປັບອາກາດ 41 ລ້ານກີບ , ໂຕະຕັ່ງນັ່ງ 39,3 ລ້ານກີບ, ເຄື່ອງພິມ 30,2 ລ້ານກີບ.

10 ຊັບສິນບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2023 – ກວດສອບ	129.298.349
ເພີ່ມຂຶ້ນ	-
ຫັກ: ຄ່າເສື່ອມມູນຄ່າ	(37.926.864)
ມູນຄ່າສຸດທິຕາມບັນຊີ ໃນວັນທີ 30 ມິຖຸນາ 2023 – ທີ່ບທອນຄືນ	**91.371.485**

11 ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທີ່ບທອນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ຕ້ອງສົ່ງການຄ້າ – ພາກສ່ວນອື່ນ	1.997.591.000	2.497.004.000
ລາຍຈ່າຍຄ້າງຈ່າຍ	2.123.434.411	1.007.722.293
ລາຍຈ່າຍຄ້າງຈ່າຍ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ 17)	1.368.791.869	-
ໜີ້ຕ້ອງສົ່ງອາກອນ	86.717.334	81.872.191
ລວມ	**5.576.534.614**	**3.586.598.484**

ລາຍຈ່າຍຄ້າງຈ່າຍ ສ່ວນໃຫຍ່ແມ່ນປະກອບດ້ວຍເງິນເດືອນ ແລະ ເງິນໂບນັດຄ້າງຈ່າຍຈຳນວນ 1.192 ລ້ານກີບ, ຄ່າບໍລິການກວດສອບ ແລະ ຄ່າປຶກສາອາກອນ 342 ລ້ານກວ່າກີບ.

12 ເງິນກູ້ຢືມ

	ທີ່ບໍ່ທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໝູນວຽນ	6.285.345.633	22.429.331.514
ບໍ່ໝູນວຽນ	9.192.007.009	9.330.019.783
ລວມ	**15.477.352.642**	**31.759.351.297**

ລາຍການເຄື່ອນໄຫວຂອງເງິນກູ້ຢືມ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2023 ມີດັ່ງລຸ່ມນີ້:

	ທີ່ບໍ່ທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ	31.759.351.297	17.894.400.000
ເງິນກູ້ຢືມທີ່ເພີ່ມ	5.628.240.000	5.000.000.000
ຊຳລະເງິນກູ້ຢືມຄືນ	(22.819.118.655)	(995.848.703)
ຂາດທຶນຈາກການຕີມູນຄ່າອັດຕາແລກປ່ຽນ	908.880.000	9.860.800.000
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**15.477.352.642**	**31.759.351.297**

ໃນວັນທີ 31 ມີນາ 2022, ບໍລິສັດໄດ້ລົງນາມສັນຍາເງິນກູ້ກັບທະນາຄານທ້ອງຖິ່ນ ໃນວົງເງິນ 5 ຕື້ກີບ, ເປັນໄລຍະເວລາ 3 ປີ ແລະ ດອກເບ້ຍ 9% ຕໍ່ປີ, ດອກເບ້ຍ ແລະ ເງິນຕົ້ນແມ່ນຊຳລະເປັນລາຍເດືອນ, ເລີ່ມແຕ່ວັນທີ 8 ພຶດສະພາ 2022 ຫາ 8 ເມສາ 2025. ການຄ້ຳປະກັນເງິນກູ້ຢືມ ແມ່ນຕ້ອງມີເງິນຝາກມີກຳນົດ ແລະ ເງິນຝາກປະຢັດ ຕາມຍອດເງິນທີ່ລະບຸໄວ້ໃນສັນຍາເງິນກູ້ (ບົດ ອະທິບາຍ 8).

ວັນທີ 27 ມິນາ 2023, ບໍລິສັດໄດ້ລົງນາມສັນຍາເງິນກູ້ຢືມກັບຜູ້ຖືຫຸ້ນ (ບໍລິສັດມະຫາທຸນ ໂຮນດິງ ຈຳກັດ) ຈຳນວນ 240.000 ໂດລາ ຫຼື ທຽບເທົ່າ 4.068 ລ້ານກີບ ກຳນົດເວລາ 3 ເດືອນ ແລະ ດອກເບ້ຍ 13% ຕໍ່ປີ. ວັນທີ 29 ພຶດສະພາ 2023, ທັງສອງຝ່າຍ ໄດ້ຕົກລົງເລື່ອນເວລາການຈ່າຍເງິນອອກໄປເປັນວັນທີ 30 ກັນຍາ 2023 (ບົດອະທິບາຍ 17).

ວັນທີ 30 ພຶດສະພາ 2023 ບໍລິສັດໄດ້ລົງນາມສັນຍາເງິນກູ້ຢືມ 1 ເດືອນກັບພາກສ່ວນທີ່ກ່ຽວຂ້ອງ ຈຳນວນ 3 ລ້ານບາດ ຫຼື ທຽບ ເທົ່າ 1.560 ລ້ານກີບ ກຳນົດໄລຍະເວລາ 1 ເດືອນ ແລະ ດອກເບ້ຍ 15% ຕໍ່ປີ ເຊິ່ງໄດ້ຊຳລະຄືນທັງໝົດໃນວັນທີ 29 ມິຖຸນາ 2023.

13 ລາຍຈ່າຍໃນການບໍລິຫານ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ທີ່ບທວນຄືນ 30 ມິຖຸນາ 2022 ກີບ
ຄ່າໃຊ້ຈ່າຍທີ່ກ່ຽວກັບພະນັກງານ	5.674.358.196	4.746.877.174
ຄ່າໃຊ້ຈ່າຍທີ່ກ່ຽວກັບການໂຄສະນາ	1.126.387.761	425.490.290
ຄ່າໃຊ້ຈ່າຍອື່ນໆ	737.584.945	566.613.376
ຄ່າບໍລິການກວດສອບ ແລະ ກົດໝາຍ	452.588.700	229.911.819
ຄ່າຕອບແທນຜູ້ບໍລິຫານ	427.509.000	434.500.000
ຄ່າໃຊ້ຈ່າຍໃນການເດີນທາງ	418.311.204	204.828.751
ຄ່າເຊົ່າ	320.955.937	256.128.707
ຄ່າໜ້ຍຫ້ຽນ	198.095.527	273.803.802
ລາຍຈ່າຍສາທາລະນຸປະໂພກ	106.640.959	82.862.546
	9.462.432.229	**7.221.016.465**

14 ເງິນປັນຜົນ

ໃນກອງປະຊຸມຜູ້ຖືຫຸ້ນສາມັນ ປະຈຳປີ 2021 ໃນວັນທີ 28 ເມສາ 2022, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີ ຈາກ ກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2021 ໃນມູນຄ່າ 5.7 ກີບຕໍ່ຮຸ້ນ, ລວມມູນຄ່າທັງໝົດ 2.280 ລ້ານກີບ ແລະ ຈັດສັນກຳໄລສຸດທິເພື່ອສຳຮອງຕາມກົດໝາຍ ຈຳນວນເງິນ 759.159.787 ກີບ.

ໃນກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2022 ໃນວັນທີ 25 ເມສາ 2023, ຜູ້ຖືຮຸ້ນໄດ້ອະນຸມັດບໍ່ໃຫ້ມີການຈ່າຍເງິນຜົນປະຈຳປີ ຈາກ ກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2022 ເນື່ອງຈາກບໍລິສັດ ສະຫງວນກະແສເງິນສົດ ເພື່ອຊຳລະເງິນກູ້ ທີ່ ຮອດກຳນົດຊຳລະພາຍໃນ 6 ເດືອນຕໍ່ໜ້າ ແລະ ເພື່ອສະໜັບສະໜູນການຂະຫຍາຍທຸລະກິດໃນປີງົບປະມານ 2023.

15 ອາກອນລາຍໄດ້

ຢູ່ໃນ ສປປ ລາວ, ການແຈ້ງຈ່າຍອາກອນລາຍໄດ້ຖືກກວດກາເປັນປົກກະຕິໂດຍລະອຽດຈາກເຈົ້າໜ້າທີ່ກ່ຽວຂ້ອງ. ນອກຈາກນັ້ນ, ບັນຫາດ້ານອາກອນທີ່ຖືກຍົກຂຶ້ນມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ການຕີຄວາມທີ່ມີສາລະສຳຄັນຈາກ ພາກສ່ວນທີ່ກ່ຽວຂ້ອງ.

ການທົບທວນດັ່ງກ່າວ ອາດຈະເຮັດໃຫ້ມີການຈ່າຍອາກອນເພີ່ມເຕີມ ຫຼື ສິ່ງເງິນຄືນທີ່ເປັນສາລະສຳຄັນ ເຊິ່ງອາດຈະເປັນສິ່ງທີ່ສຳຄັນ ເຊິ່ງຈະສົ່ງຜົນໃຫ້ການຊຳລະ ຫຼື ຮັບຄືນໄດ້ຖືກຮັບຮູ້ວ່າເປັນການປັບອາກອນລາຍໄດ້ໃນປີທີ່ການທົບທວນຄືນສຳເລັດ.

ການກະທົບຍອດລະຫວ່າງ ລາຍຈ່າຍອາກອນ ແລະ ກຳໄລທາງບັນຊີ ສຳລັບປີການບັນຊີ ມີດັ່ງນີ້:

	ກີບ
ກຳໄລກ່ອນອາກອນ - ການບັນຊີ	5.299.026.261
ຜົນກະທົບດ້ານອາກອນ:	
ເງິນແຮການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ	7.500.000
ກຳໄລຈາກຕີມູນຄ່າອັດຕາແລກປ່ຽນ[1]	(6.224.257.636)
ລາຍຮັບທີ່ຕ້ອງເສຍອາກອນ:	**(917.713.375)**
ອັດຕາອາກອນກຳໄລ 20%	-

(1) ກຳໄລຈາກການຕີມູນຄ່າອັດຕາແລກປ່ຽນແມ່ນເພື່ອຈຸດປະສົງໃນການຄຳນວນອາກອນລາຍໄດ້

16 ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈຳນວນຂອງຮຸ້ນສາມັນ ທີ່ມີທັງໝົດ ດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ທີ່ບທວນຄືນ 31 ມິຖຸນາ 2022 ກີບ
ກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນ (ກີບ)	5.299.026.261	(722.587.249)
ຈຳນວນຮຸ້ນສາມັນ (ຮຸ້ນ)	400.000.000	400.000.000
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	13,25	(1,81)

17 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2023 ມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ທີ່ບທວນຄືນ 30 ມິຖຸນາ 2022 ກີບ
ລາຍຈ່າຍອື່ນໆ:		
ຜູ້ຖືຫຸ້ນ - ຄ່າຄ້ຳປະກັນ	1.220.577.988	1.344.782.049
ຜູ້ຖືຫຸ້ນ - ລາຍຈ່າຍດອກເບ້ຍ	148.213.881	-
	1.368.791.869	**1.344.782.049**
ການຊື້ສິນຄ້າ ແລະ ບໍລິການ:		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ*		
ຊື້ຊັບສິນເຊົ່າສິນເຊື່ອ	-	4.818.439.000
ຈ່າຍຄ່ານາຍໜ້າ	-	241.750.000
ລາຍຈ່າຍອື່ນໆ	-	68.250.000
	-	**5.128.439.000**
ລວມ	**1.368.791.869**	**6.473.221.049**

* ພາກສ່ວນທີ່ກ່ຽວຂ້ອງອື່ນໆແມ່ນທຸລະກຳລະຫວ່າງບໍລິສັດ ແລະ ຜູ້ສະໜອງທີ່ມີເຈົ້າຂອງແມ່ນໜຶ່ງໃນຄະນະບໍລິຫານ ຂອງບໍລິສັດ. ເຊິ່ງສະພາບໍລິຫານຊຸດດັ່ງກ່າວໄດ້ສິ້ນສຸດວາລະໃນວັນທີ 28 ເມສາ 2022.

ອີງຕາມລະບຽບການກ່ຽວກັບພາກສ່ວນທີ່ກ່ຽວຂ້ອງທີ່ອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບລົງວັນທີ 26 ຕຸລາ 2016, ຜູ້ສະໜອງບໍ່ໄດ້ຖືກພິຈາລະນາວ່າເປັນພາກສ່ວນທີ່ກ່ຽວຂ້ອງ. ດັ່ງນັ້ນ, ການເຮັດທຸລະກຳໃນໄລຍະ 6 ເດືອນ ຂ້າງເທິງສະແດງໃຫ້ເຫັນທຸລະກຳໃນລະຫວ່າງ 1 ມັງກອນ - 28 ເມສາ 2022 ເທົ່ານັ້ນ.

17 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຂ. ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ ສິນຄ້າ/ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ຕ້ອງສົ່ງ:		
ຜູ້ຖືຮຸ້ນ	1.368.791.869	-

ໃນນັ້ນລວມມີໜີ້ຕ້ອງສົ່ງຄ່າຄ້ຳປະກັນເງິນກູ້ຢືມ 1.220 ລ້ານກີບ ແລະ ດອກເບ້ຍເງິນກູ້ຢືມຄ້າງຈ່າຍ 148 ລ້ານກີບ

ເງິນກູ້ຢືມໄລຍະສັ້ນ:		
ຜູ້ຖືຫຸ້ນ (ບົດອະທິບາຍ 12)	4.068.240.000	-

ຄ. ຄ່າຕອບແທນຜູ້ບໍລິຫານ

ຄ່າຕອບແທນໃຫ້ຜູ້ບໍລິຫານມີດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ທີ່ບທວນຄືນ 30 ມິຖຸນາ 2022 ກີບ
ເງິນເດືອນ ແລະ ອື່ນໆ	427.509.000	434.500.000

18 ພາລະຜູກພັນ

ບໍລິສັດ ມີພາລະຜູກພັນຕາມສັນຍາເຊົ່າພື້ນທີ່ສຳນັກງານໄລຍະຍາວ ສຳລັບການເຊົ່າພື້ນທີ່ຫ້ອງການ

ໃນວັນທີ 30 ມິຖຸນາ 2023, ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານແຕ່ບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ພາຍໃນ 1 ປີ	409.987.732	188.093.204
ເກີນ 1 ປີ ແຕ່ບໍ່ເກີນ 5 ປີ	1.450.779.221	1.482.771.482
ລວມ	**1.860.766.953**	**1.670.864.686**

19 ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ບໍ່ມີເຫດການທີ່ເປັນສາລະສຳຄັນຫຼັງບົດລາຍງານຖານະການເງິນ ທີ່ມີຜົນກະທົບທີ່ເປັນສາລະສຳຄັນຕໍ່ຕົວເລກໃນຂໍ້ມູນການເງິນການປີ ຂອງບໍລິສັດ.